**ສັນຍາວ່າດ້ວຍ ລະບຽບການຊາຍແດນ**

**ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ແລະ ລັດຖະບານສາທາລະນະລັດ ປະຊາຊົນຈີນ**

-------0000-------

ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ປະຊາຊົນຈີນ,

ເພື່ອປັບປຸງ ແລະ ເສີມຂະຫຍາຍ ສາຍພົວພັນມິດຕະພາບ ຖານບ້ານໃກ້ເຮືອນຄຽງ ລະຫວ່າງ ສອງປະເທດ, ເພື່ອພ້ອມກັນປົກປັກຮັກສາຄວາມໝັ້ນຄົງຂອງຊາຍແດນ ແລະ ຄວາມ ສະຫງົບສຸກ ຕາມເຂດຊາຍແດນ ລະຫວ່າງ ສອງປະເທດ ບົນພື້ນຖານ ເຄົາລົບນັບ ຖືອະທິປະໄຕ ແລະ ພື້ນແຜ່ນດິນອັນຄົບຖ້ວນຂອງກັນ ແລະ ກັນ, ບໍ່ຮຸກຮານກັນ, ບໍ່ແຊກ ແຊງເຂົ້າກິດຈະການພາຍໃນຂອງກັນ ແລະ ກັນ, ສະເໝີພາບ ຕ່າງຝ່າຍຕ່າງໄດ້ຮັບຜົນປະ ໂຫຍດ ແລະ ຢູ່ຮ່ວມກັນໂດຍສັນຕິ,

ບົນຈິດໃຈຮ່ວມມື ແລະ ເຂົ້າອົກເຂົ້າໃຈກັນ ເພື່ອແກ້ໄຂບັນຫາຕາມຊາຍແດນ, ເພື່ອສ້າງຊາຍແດນ ລາວ-ຈີນ ໃຫ້ກາຍເປັນຊາຍແດນ ສັນຕິພາບ, ມິດຕະພາບ ແລະ ການ ຮ່ວມມື, ເພື່ອອຳນວຍຄວາມສະດວກໃຫ້ແກ່ການດຳລົງຊີວິດ ແລະ ການໄປມາຫາສູ່ກັນ ລະຫວ່າງ ປະຊາຊົນຕາມເຂດຊາຍແດນຂອງສອງປະເທດ,

ອີງໃສ່ "ສົນທິສັນຍາຊາຍແດນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາ ຊົນລາວ ແລະ ສາທາລະນະລັດ ປະຊາຊົນຈີນ" ສະບັບລົງວັນທີ 24/10/1991 ທີ່ປັກກິ່ງ,

ອີງໃສ່ "ອະນຸສັນຍາວ່າດ້ວຍເສັ້ນຊາຍແດນ ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ປະຊາຊົນຈີນ" ສະບັບ ລົງວັນທີ 31/1/1993 ທີ່ວຽງຈັນ,

ຈຶ່ງໄດ້ຕົກລົງທຳສັນຍາສະບັບນີ້ ພ້ອມທັງກຳນົດບັນດາມາດຕາດັ່ງລຸ່ມນີ້:

## **ພາກທີ I**

### ວ່າດ້ວຍການປົກປັກຮັກສາທິດເນັ່ງຂອງເສັ້ນຊາຍແດນ,
### ຫລັກໝາຍຊາຍແດນ, ຫລັກໝາຍເພີ່ມ ແລະ ເຄື່ອງໝາຍເສັ້ນຊາຍແດນ.

### **ມາດຕາ 1**

ເສັ້ນຊາຍແດນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ປະຊາຊົນຈີນ ໄດ້ຖືກກຳນົດ ແລະຂີດໝາຍໄວ້ຕາມ "ສົນທິສັນຍາຊາຍແດນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ປະຊາຊົນຈີນ" ແລະ "ອະນຸສັນຍາວ່າດ້ວຍເສັ້ນຊາຍແດນ ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ປະຊາຊົນຈີນ", ເຊິ່ງໄດ້ແບ່ງເຂດແດນທາງນ່ານຟ້າ ແລະ ໃຕ້ດິນ ຕາມທິດທາງຂອງເສັ້ນຕັ້ງສາກ.

ທັງສອງຝ່າຍມີພັນທະ ແລະ ຮັບປະກັນການເຄົາລົບນັບຖືເສັ້ນຊາຍແດນ ລະຫວ່າງ ສອງປະເທດ.

### **ມາດຕາ 2**

1. ເພື່ອປົກປັກຮັກສາທິດເນັ່ງຂອງເສັ້ນຊາຍແດນ, ຫລັກໝາຍຊາຍແດນ, ຫລັກໝາຍເພີ່ມ ແລະ ເຄື່ອງໝາຍເສັ້ນຊາຍແດນໃຫ້ທັງສອງຝ່າຍ ອີງຕາມເອກະສານດັ່ງລຸ່ມນີ້ :

ກ. "ສົນທິສັນຍາຊາຍແດນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ປະຊາຊົນຈີນ" ທີ່ເຊັນກັນໃນວັນທີ່ 24/10/1991, ຕໍ່ໄປນີ້ເອີ້ນຫຍໍ້ວ່າ ສົນທິສັນຍາຊາຍແດນ ລະຫວ່າງ ສອງປະເທດ.

ຂ. "ອະນຸສັນຍາວ່າດ້ວຍເສັ້ນຊາຍແດນ ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ປະຊາຊົນຈີນ" ທີ່ເຊັນກັນໃນວັນທີ່ 31/1/1993, ຕໍ່ໄປນີ້ເອີ້ນຫຍໍ້ວ່າ ອະນຸສັນຍາຊາຍແດນ ລະຫວ່າງ ສອງປະເທດ.

ຄ. "ແຜນທີ່ສົມບູນຕິດແນບສົນທິສັນຍາຊາຍແດນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ປະຊາຊົນຈີນ", ຕໍ່ໄປນີ້ເອີ້ນຫຍໍ້ວ່າ ແຜນທີ່ ສົມບູນຕິດແນບສົນທິສັນຍາຊາຍແດນ.

ງ. ບັນດາເອກະສານ ແລະ ແຜນທີ່ ກ່ຽວກັບຊາຍແດນ ທີ່ລັດຖະບານຂອງສອງ ປະເທດຈະເຊັນກັນໃນຂັ້ນຕໍ່ໄປ.

2. ໃນເວລາກຳນົດທິດເນັ່ງຂອງເສັ້ນຊາຍແດນ ລາວ-ຈີນ ແລະ ທີ່ຕັ້ງຂອງຫລັກໝາຍ ຊາຍແດນ, ຫລັກໝາຍເພີ່ມ ແລະ ເຄື່ອງໝາຍເສັ້ນຊາຍແດນອື່ນໆ ເປັນອັນລະອຽດກັບ ທີ່ນັ້ນ, ໃຫ້ຖືເອົາຂໍ້ຕົກລົງ ທີ່ໄດ້ລະບຸໄວ້ໃນພາກທີ່ສອງຂອງອະນຸສັນຍາຊາຍແດນ ລະຫວ່າງ ສອງ ປະເທດ, ແຜນທີ່ສົມບູນຕິດແນບສົນທິສັນຍາຊາຍແດນ ພ້ອມທັງບັນດາເອກະສານ ແລະ ແຜນທີ່ ທີ່ກ່ຽວຂ້ອງກັບຊາຍແດນ ຊຶ່ງລັດຖະບານຂອງສອງປະເທດ ຈະເຊັນກັນໃນຕໍ່ ໜ້າເປັນບ່ອນອີງ.

<u>**ມາດຕາ 3**</u>

1. ເພື່ອປົກປັກຮັກສາຫລັກໝາຍຊາຍແດນ, ຫລັກໝາຍເພີ່ມ ແລະ ເຄື່ອງໝາຍ ເສັ້ນຊາຍແດນ ໃຫ້ມີປະສິດທິຜົນ, ທັງສອງຝ່າຍແບ່ງຄວາມຮັບຜິດຊອບນຳກັນດັ່ງລຸ່ມນີ້:

- ຝ່າຍລາວຮັບຜິດຊອບ ຫລັກໝາຍຊາຍແດນ ແລະ ຫລັກໝາຍເພີ່ມ ເລກຄູ່.
- ຝ່າຍຈີນຮັບຜິດຊອບ ຫລັກໝາຍຊາຍແດນ ແລະ ຫລັກໝາຍເພີ່ມ ເລກຄີກ.
- ຫລັກຈຸດຈັ້ງຂອງຫລັກໝາຍຊາຍແດນ ແລະ ຫລັກຈຸດຈັ້ງຂອງຫລັກໝາຍເພີ່ມ ທີ່ຕັ້ງຢູ່ໃນດິນແດນຂອງຝ່າຍໃດ ແມ່ນຝ່າຍນັ້ນຮັບຜິດຊອບ, ຖ້າຕັ້ງຢູ່ເທິງເສັ້ນຊາຍແດນ ແມ່ນສອງຝ່າຍຮັບຜິດຊອບຮ່ວມກັນ.

2. ທັງສອງຝ່າຍຄວນໃຫ້ການປົກປັກຮັກສາ ຫລັກໝາຍຊາຍແດນ, ຫລັກໝາຍ ເພີ່ມ ແລະ ເຄື່ອງໝາຍເສັ້ນຊາຍແດນອື່ນໆ ພ້ອມທັງດຳເນີນມາດຕະການທີ່ຈຳເປັນ ເພື່ອ ປ້ອງກັນບໍ່ໃຫ້ຫລັກໝາຍຊາຍແດນ, ຫລັກໝາຍເພີ່ມ ແລະ ເຄື່ອງໝາຍເສັ້ນຊາຍແດນ ອື່ນໆ ຖືກຍົກຍ້າຍ, ເປ່ເພ ຫລືຖືກທຳລາຍ.

ຖ້າຫາກຝ່າຍໃດຝ່າຍນຶ່ງພົບເຫັນຫລັກໝາຍຊາຍແດນ, ຫລັກໝາຍເພີ່ມ ແລະ ເຄື່ອງໝາຍເສັ້ນຊາຍແດນອື່ນໆຖືກຍົກຍ້າຍ, ເປ່ເພ ຫລືຖືກທຳລາຍ ຕ້ອງແຈ້ງໃຫ້ອີກຝ່າຍ

ນຶ່ງຊາບໄວເທົ່າທີ່ຈະໄວໄດ້. ຝ່າຍທີ່ຮັບຜິດຊອບການບົວລະບັດຮັກສາຫລັກໝາຍຊາຍແດນ, ຫລັກໝາຍເພີ່ມ ແລະ ເຄື່ອງໝາຍເສັ້ນຊາຍແດນອື່ນໆ ທີ່ໄດ້ກ່າວມາຂ້າງເທິງນັ້ນ ຈະຕ້ອງໄດ້ສ້ອມແປງຄືນ ຫລືກໍ່ສ້າງຄືນໃໝ່ ໃຫ້ຢູ່ໃນທີ່ຕັ້ງເດີມ ໂດຍຊ້ອງໜ້າຜູ້ທີ່ໄດ້ຮັບການມອບໝາຍຂອງອີກຝ່າຍນຶ່ງ. ທັງສອງຝ່າຍຕ້ອງພ້ອມກັນເຮັດບົດບັນທຶກ ແລະ ລາຍງານຂັ້ນເທິງຂອງຕົນ.

ຖ້າຫາກວ່າມີຄົນຂອງຝ່າຍໃດຝ່າຍນຶ່ງ ໄດ້ຍົກຍ້າຍ, ໄດ້ທຳໃຫ້ເປ່ເພ ຫລືທຳລາຍຫລັກໝາຍຊາຍແດນ, ຫລັກໝາຍເພີ່ມ ແລະ ເຄື່ອງໝາຍເສັ້ນຊາຍແດນອື່ນໆ, ຝ່າຍນັ້ນຈະຕ້ອງຮັບພາລະຄ່າໃຊ້ຈ່າຍທັງໝົດ ໃນການສ້ອມແປງຄືນໃໝ່ນັ້ນ.

ຖ້າຫາກວ່າຫລັກໝາຍຊາຍແດນ, ຫລັກໝາຍເພີ່ມ ແລະ ເຄື່ອງໝາຍເສັ້ນຊາຍແດນອື່ນໆ ທີ່ຖືກຍົກຍ້າຍ, ເປ່ເພ ຫລືຖືກທຳລາຍນັ້ນ ບໍ່ສາມາດສ້ອມແປງ ຫລືສ້າງຄືນໃໝ່ໃຫ້ຕັ້ງຢູ່ໃນທີ່ເດີມໄດ້, ທັງສອງຝ່າຍຈະປຶກສາຫາລື ບົນຫລັກການບໍ່ປ່ຽນແປງທິດເນັ້ງຂອງເສັ້ນຊາຍແດນ, ເລືອກເອົາສະຖານທີ່ບ່ອນໃໝ່ທີ່ເໝາະສົມ ເພື່ອປັກຫລັກ, ພ້ອມທັງລົງນາມໃນເອກະສານທີ່ກ່ຽວຂ້ອງກັບເລື້ອງນີ້ ແລະ ໃຫ້ຖືມັນເປັນ ເອກະສານຕິດແນບອະນຸສັນຍາຊາຍແດນ ລະຫວ່າງ ສອງປະເທດ ພາຍຫລັງທີ່ໄດ້ຮັບ ການອະນຸມັດຈາກລັດຖະບານຂອງທັງສອງຝ່າຍ ພ້ອມທັງບັນທຶກເຂົ້າໃນເອກະສານການກວດກາປະສົມໃນຄັ້ງໜ້າ.

3. ໃນເວລາສ້ອມແປງຄືນໃໝ່ຫລັກໝາຍຊາຍແດນ, ຫລັກໝາຍເພີ່ມ ແລະ ເຄື່ອງໝາຍເສັ້ນຊາຍແດນອື່ນໆທີ່ຖືກຍົກຍ້າຍ, ເປ່ເພ ຫລືຖືກທຳລາຍນັ້ນ, ຕ້ອງຮັກສາຮູບແບບ, ຂະໜາດ, ເຄື່ອງໝາຍ ແລະ ຕົວອັກສອນໃຫ້ເໝືອນເດີມ ແລະ ຕ້ອງໃຫ້ຖືກກັບທີ່ຕັ້ງທີ່ໄດ້ກຳນົດໄວ້ ໃນອະນຸສັນຍາຊາຍແດນ ລະຫວ່າງສອງປະເທດ. ພາຍຫລັງສ້ອມແປງຄືນແລ້ວ ທັງສອງຝ່າຍຈະຕ້ອງຖ່າຍຮູບຄືນໃໝ່, ແຕ້ມແຜນທີ່ຫຍໍ້ກ່ຽວກັບທີ່ຕັ້ງຂອງຫລັກໝາຍ ພ້ອມທັງເຮັດບົດບັນ ທຶກສ້ອມແປງຮ່ວມກັນ.

4. ຝ່າຍໃດຝ່າຍນຶ່ງສາມາດດຳເນີນການກວດກາທິດເນັ້ງ ຂອງເສັ້ນຊາຍແດນ, ຫລັກໝາຍຊາຍແດນ, ຫລັກໝາຍເພີ່ມ ແລະ ເຄື່ອງໝາຍເສັ້ນຊາຍແດນອື່ນໆ ທີ່ຕັ້ງຢູ່ເສັ້ນຊາຍແດນພຽງແຕ່ຝ່າຍດຽວໄດ້. ຖ້າຕ້ອງການຂ້າມຜ່ານຊາຍແດນໄປອີກເບື້ອງນຶ່ງເພື່ອກວດກາ

ຕ້ອງແຈ້ງໃຫ້ຝ່າຍນັ້ນຊາບລ່ວງໜ້າຢ່າງໜ້ອຍ 10 ວັນ, ເມື່ອໄດ້ຮັບການຕົກລົງເຫັນດີຈາກ ຝ່າຍນັ້ນແລ້ວ ຈຶ່ງດຳເນີນການກວດກາໄດ້.

5. ຝ່າຍໃດຝ່າຍນຶ່ງບໍ່ສາມາດປັກຫລັກໝາຍຊາຍແດນ, ຫລັກໝາຍເພີ່ມ ຫລືເຄື່ອງໝາຍເສັ້ນຊາຍແດນອື່ນໆໃໝ່ ຕາມເສັ້ນຊາຍແດນແຕ່ຝ່າຍດຽວ.

6. ເພື່ອປົກປັກຮັກສາເສັ້ນຊາຍແດນ ແລະ ສະກັດກັ້ນບໍ່ໃຫ້ເກີດມີສະພາບທີ່ມີບ້ານຕັ້ງຢູ່ເທິງເສັ້ນຊາຍແດນ, ຖ້າບໍ່ໄດ້ຮັບການຕົກລົງເຫັນດີຈາກທັງສອງຝ່າຍ ຫ້າມບໍ່ໃຫ້ປຸກເຮືອນໃໝ່ ຫລືສິ່ງປຸກສ້າງທີ່ມີລັກສະນະຖາວອນອື່ນໆ ໃນຂອບເຂດລັດສະໝີ 100 ແມັດຫ່າງຈາກແຕ່ລະເບື້ອງຂອງເສັ້ນຊາຍແດນ, ເວັ້ນເສຍແຕ່ບັນດາສິ່ງປຸກສ້າງ ທີ່ໃຊ້ສຳລັບປົກປັກຮັກສາເສັ້ນຊາຍແດນ.

## <u>ມາດຕາ 4</u>

1. ເພື່ອເຮັດໃຫ້ເສັ້ນຊາຍແດນມີຄວາມຈະແຈ້ງຍິ່ງຂຶ້ນ, ເມື່ອທັງສອງຝ່າຍ ເຫັນວ່າມີຄວາມຈຳເປັນ ກໍສາມາດພ້ອມກັນປັກຫລັກໝາຍເພີ່ມອັນໃຫມ່ໃນບາງຈຸດຂອງເສັ້ນຊາຍແດນໄດ້.

2. ເພື່ອໃຫ້ແນມເຫັນເສັ້ນຊາຍແດນ ໄດ້ສະດວກຍິ່ງຂຶ້ນ, ເມື່ອທັງສອງຝ່າຍ ເຫັນວ່າມີຄວາມຈຳເປັນ ກໍຄວນພ້ອມກັນຖາງແລວທາງຂອງເສັ້ນຊາຍແດນ ເບື້ອງລະສາມແມັດ (3 ແມັດ) ຢູ່ບາງຕອນຂອງເສັ້ນຊາຍແດນ.

## <u>ພາກທີ II</u>

### ວ່າດ້ວຍການກວດກາຊາຍແດນປະສົມ

## <u>ມາດຕາ 5</u>

1. ທັງສອງຝ່າຍ ຈະຕ້ອງໄດ້ດຳເນີນການກວດກາຊາຍແດນປະສົມ ໂດຍອີງຕາມຂໍ້ກຳນົດທີ່ກ່າວໄວ້ໃນມາດຕາ 12 ຂອງອະນຸສັນຍາຊາຍແດນ ລະຫວ່າງ ສອງປະເທດ ແລະ ຈະປຶກສາຫາລືກັນ ໂດຍຜ່ານທາງການທູດ ເພື່ອກຳນົດບັນຫາທີ່ກ່ຽວຂ້ອງ ກັບການດຳເນີນການກວດກາປະສົມ ຕໍ່ເສັ້ນຊາຍແດນທັງໝົດ ຫລືບາງຕອນຂອງເສັ້ນຊາຍແດນ.

2. ໃນການກວດກາປະສົມແຕ່ລະຄັ້ງ, ທັງສອງຝ່າຍ ຈະຈັດຕັ້ງຄະນະກຳມະການກວດກາຊາຍແດນປະສົມ. ໜ້າທີ່, ຫລັກການ, ຂັ້ນຕອນຂອງການປະຕິບັດງານ, ວິທີເຮັດວຽກ ແລະ ອື່ນໆ ຂອງການກວດກາປະສົມນັ້ນ ແມ່ນໃຫ້ຄະນະກຳມະການດັ່ງກ່າວເປັນຜູ້ກຳນົດ.

3. ພາຍຫລັງການກວດກາປະສົມແຕ່ລະຄັ້ງ, ທັງສອງຝ່າຍ ຈະລົງນາມໃນຂໍ້ຕົກລົງກ່ຽວກັບບັນຫາທີ່ໄດ້ເຫັນດີນຳກັນ ແລະ ເມື່ອໄດ້ຮັບການອະນຸມັດຈາກລັດຖະບານຂອງສອງຝ່າຍແລ້ວ ໃຫ້ຖືມັນເປັນເອກກະສານ ຕິດແນບສົນທິສັນຍາຊາຍແດນ ລະຫວ່າງສອງປະເທດ ແລະ ເປັນເອກກະສານເພີ່ມເຕີມ ຂອງອະນຸສັນຍາຊາຍແດນ ລະຫວ່າງສອງປະເທດ.

## <u>ພາກທີ III</u>

## ວ່າດ້ວຍການດຳເນີນການຜະລິດ ແລະ ການເຄື່ອນໄຫວອື່ນໆຕາມເຂດຊາຍແດນ

### <u>ມາດຕາ 6</u>

1. ບັນດາແມ່ນ້ຳທີ່ໄຫລຜ່ານຊາຍແດນ ຂອງສອງປະເທດ ໃນສັນຍາສະບັບນີ້ເອີ້ນວ່າແມ່ນ້ຳຊາຍແດນ.

2. ການດຳເນີນການວັດແທກອຸທົກກະສາດ ໃນແມ່ນ້ຳຊາຍແດນ, ການນຳໃຊ້ແມ່ນ້ຳຊາຍແດນ ແລະ ການເຄື່ອນໄຫວອື່ນໆ ທີ່ກ່ຽວຂ້ອງເຖິງລະບຽບການຊົມໃຊ້ແມ່ນ້ຳຊາຍແດນ, ທັງສອງຝ່າຍ ຈະຕ້ອງດຳເນີນການປຶກສາຫາລືກັນຕ່າງຫາກ ບົນຫລັກການສະເໝີພາບຕ່າງຝ່າຍ ຕ່າງໄດ້ຮັບຜົນ, ນັບຖືຜົນປະໂຫຍດຂອງກັນ ແລະ ກັນ ແລະ ພະຍາຍາມຫລີກລ້ຽງບໍ່ໃຫ້ ກໍ່ຄວາມເສຍຫາຍໃຫ້ແກ່ອີກຝ່າຍນຶ່ງ.

ຖ້າຫາກວ່າຝ່າຍນຶ່ງໄດ້ກໍ່ຄວາມເສັຍຫາຍ ໃຫ້ແກ່ອີກຝ່າຍນຶ່ງ ດ້ວຍການກໍ່ສ້າງ ຫລືການສ້າງເພຄັນຄູ, ປະຕູນ້ຳ ແລະ ກິດຈະການໄຟຟ້ານ້ຳຕົກອື່ນໆ ຕາມແມ່ນ້ຳຊາຍແດນ, ກໍ່ຄືການນຳໃຊ້ນ້ຳ, ການປ່ຽນແປງນ້ຳໄຫລ ແລະອື່ນໆ, ທັງສອງຝ່າຍຈະປຶກສາຫາລືກັນ

ເພື່ອແກ້ໄຂບົນຈິດໃຈສະເໝີພາບ, ອຳນວຍຄວາມສະດວກໃຫ້ກັນ ແລະ ກັນ ແລະ ນັບຖືຜົນປະໂຫຍດຂອງກັນ ແລະກັນ.

3. ພົນລະເມືອງຂອງສອງຝ່າຍ ສາມາດຫາລ້ຽງຊີບຕາມລ່ອງແມ່ນ້ຳຊາຍແດນໃນຂອບເຂດດິນແດນຂອງປະເທດຕົນ ໂດຍອີງຕາມກົດໝາຍ ແລະ ລະບຽບການຂອງປະເທດໃຜລາວ.

ຫ້າມບໍ່ໃຫ້ນຳໃຊ້ວັດຖຸລະເບີດ ຫລືທາດເບື່ອ, ທາດເຄມີ, ຮາກໄມ້ທີ່ມີພິດ, ຢາມົນເມົາທຸກສະນິດ ແລະ ອື່ນໆ ທີ່ອາດເປັນໄພອັນຕະລາຍຕໍ່ຊັບພະຍາກອນປະເພດ ສັດນ້ຳໃນແມ່ນ້ຳຊາຍແດນ ເພື່ອຫລີກລ້ຽງບໍ່ໃຫ້ລ່ອງນ້ຳຖືກເປິະເປື້ອນ ແລະ ບໍ່ໃຫ້ມີການບົກແຫ້ງຂອງບໍ່ເກີດຂອງສາຍນ້ຳ.

## ມາດຕາ 7

ທັງສອງຝ່າຍຕ້ອງດຳເນີນມາດຕະການ ເພື່ອປົກປັກຮັກສາຄວາມສະອາດ, ບໍ່ໃຫ້ເກີດສິ່ງເປິະເປື້ອນ ແກ່ສະພາບແວດລ້ອມ ແລະ ລະບົບນິເວດວິທະຍາຕາມເຂດຊາຍແດນ. ຫ້າມບໍ່ໃຫ້ເກັບມ້ຽນ ແລະ ແຜ່ກະຈາຍສິ່ງໂສໂຄກທີ່ເປັນທາດເບື່ອ ຕາມເຂດໃກ້ໆເສັ້ນຊາຍແດນເພື່ອຫລີກເວັ້ນການເຮັດໃຫ້ ໜ້າດິນ, ໃຕ້ດິນກໍ່ຄືອາກາດເປິະເປື້ອນ.

ຖ້າຫາກວ່າການເກັບມ້ຽນ ແລະ ແຜ່ກະຈາຍສິ່ງໂສໂຄກທີ່ເປັນທາດເບື່ອຂອງຝ່າຍນຶ່ງ ໄດ້ສ້າງຄວາມເສຍຫາຍໃຫ້ອີກຝ່າຍນຶ່ງ, ທັງສອງຝ່າຍຈະຕ້ອງຮ່ວມກັນຕີລາຄາ ລະດັບຄວາມເສຍຫາຍດັ່ງກ່າວ ແລະ ຝ່າຍທີ່ໄດ້ກໍ່ຄວາມເສຍຫາຍ ຈະຕ້ອງຮັບຜິດຊອບໃຊ້ແທນຜົນເສຍຫາຍໃຫ້ອີກຝ່າຍນຶ່ງຄືນ.

## ມາດຕາ 8

ຫ້າມບໍ່ໃຫ້ພົນລະເມືອງໃນເຂດຊາຍແດນຂອງທັງສອງຝ່າຍ ຂ້າມຊາຍແດນໄປເພື່ອຕັດໄມ້, ເຮັດໄຮ່, ເຮັດນາ, ເຮັດສວນ, ລ່າເນື້ອ ແລະ ຂຸດຄົ້ນເຄື່ອງປ່າຂອງດົງ ຫລື ເຄື່ອນໄຫວເພື່ອຈຸດປະສົງອື່ນໆ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກອົງການທີ່ມີສິດ ອຳນາດຂອງທັງສອງຝ່າຍ. ທັງສອງຝ່າຍຈະນຳໃຊ້ມາດຕະການອັນຈຳເປັນ ເພື່ອປົກປັກຮັກສາສັດປ່າທີ່ມີຄ່າ ແລະ ຫ້າມບໍ່ໃຫ້ນຳໃຊ້ວິທີການໃດນຶ່ງ ທີ່ພາໃຫ້ສັດປ່າເຄື່ອນຍ້າຍ ຈາກດິນແດນຂອງຝ່າຍນຶ່ງໄປຢູ່ດິນແດນຂອງອີກຝ່າຍນຶ່ງ.

## ມາດຕາ 9

ຖ້າວ່າຝ່າຍນຶ່ງປະສົງຢາກດຳເນີນການຖ່າຍພາບທາງອາກາດ ແລະ ສຳຫລວດສະມາບພື້ນທີ່ ທາງອາກາດຢູ່ໃກ້ເຂດຊາຍແດນຈະຕ້ອງແຈ້ງໃຫ້ ອີກຝ່າຍນຶ່ງຊາບລ່ວງໜ້າໂດຍຜ່ານທາງການທູດ ແລະ ຖ້າວ່າມີຄວາມຈຳເປັນເຂົ້າໄປໃນດິນແດນຂອງອີກຝ່າຍນຶ່ງຈະຕ້ອງໄດ້ຮັບຄວາມເຫັນດີເຫັນພ້ອມຂອງຝ່າຍນັ້ນເສຍກ່ອນ.

## ມາດຕາ 10

ຫ້າມບໍ່ໃຫ້ທັງສອງຝ່າຍ ດຳເນີນການຝຶກແອບຊ້ອມລົບທຸກປະເພດ ໃນລັດສະໝີສອງພັນແມັດ (2.000 ແມັດ) ຫ່າງຈາກເສັ້ນຊາຍແດນຂອງທັງສອງປະເທດ.

ຫ້າມບໍ່ໃຫ້ຍິງປືນຂ້າມຊາຍແດນ, ຖ້າຝ່າຍໃດຝ່າຍນຶ່ງຕ້ອງການຈູດລະເບີດໃກ້ເຂດຊາຍແດນ ຕ້ອງ ແຈ້ງຂ່າວໃຫ້ອີກຝ່າຍນຶ່ງຊາບກ່ອນ.

## ມາດຕາ 11

ການສຳຫລວດທໍລະນີສາດ ແລະ ການຂຸດຄົ້ນບໍ່ແຮ່ໃນເຂດຊາຍແດນ ໃຫ້ດຳເນີນຢູ່ໃນດິນແດນຂອງຝ່າຍຕົນ ແລະ ຫ່າງຈາກເສັ້ນຊາຍແດນເບື້ອງລະຫ້າຮ້ອຍແມັດ (500 ແມັດ).

ຖ້າການສຳຫລວດທໍລະນີສາດ ແລະ ຂຸດຄົ້ນບໍ່ແຮ່ນັ້ນ ຫາກຕ່ຳກ່ວາຫ້າຮ້ອຍແມັດ (500 ແມັດ) ຫ່າງຈາກເສັ້ນຊາຍແດນ ສອງຝ່າຍຕ້ອງປຶກສາຫາລືແກ້ໄຂນຳກັນບົນພື້ນຖານໄດ້ຮັບຜົນປະໂຫຍດຮ່ວມກັນ ແລະ ບໍ່ໃຫ້ມີຜົນສະທ້ອນແກ່ອີກຝ່າຍນຶ່ງ.

## ມາດຕາ 12

1. ຫ້າມບໍ່ໃຫ້ທຳການຈູດປ່າ ໃນຂອບເຂດ ຫ້າຮ້ອຍແມັດ (500 ແມັດ) ຫ່າງຈາກແຕ່ລະເບື້ອງຂອງເສັ້ນຊາຍແດນ.

2. ໃນດ້ານການປົກປັກຮັກສາປ່າໄມ້ ທັງສອງຝ່າຍຈະວາງມາດຕະການ ແລະ ຮ່ວມມືກັນ ເພື່ອຫລີກເວັ້ນບໍ່ໃຫ້ອັກຄີໄພເກີດຂຶ້ນຢູ່ໃກ້ເຂດຊາຍແດນ ກໍຄືເພື່ອກີດກັ້ນບໍ່ໃຫ້ໄຟໄໝ້ປ່າຕາມເຂດຊາຍແດນ ແຜ່ລາມຂ້າມເສັ້ນຊາຍແດນໄປຫາອີກຝ່າຍນຶ່ງ.

ຖ້າວ່າເກີດອັກຄີໄພຕ້ອງດັບມອດຢ່າງທັນການ. ຖ້າຝ່າຍໃດຝ່າຍນຶ່ງສັງເກດເຫັນອັກຄີໄພນັ້ນ ອາດຈະແຜ່ລາມຂ້າມຊາຍແດນໄປ ຕ້ອງແຈ້ງຂ່າວໃຫ້ອີກຝ່າຍນຶ່ງຊາບໂດຍດ່ວນ ຖ້າຝ່າຍນຶ່ງຫາກຮ້ອງຂໍຄວາມຊ່ວຍເຫລືອ ອີກຝ່າຍນຶ່ງຕ້ອງຊ່ວຍມອດໄຟນັ້ນໃຫ້ທັນການ ແລະ ສຸດຄວາມສາມາດຂອງຕົນ.

3. ຖ້າວ່າໄຟໄໝ້ຫາກລາມກາຍຊາຍແດນໄປ ອັນໄດ້ສ້າງຄວາມເສຍຫາຍທາງດ້ານວັດຖຸໃຫ້ອີກຝ່າຍນຶ່ງ, ທັງສອງຝ່າຍຈະຕ້ອງຕີລາຄາລະດັບຄວາມເສຍຫາຍນັ້ນ ແລະ ຝ່າຍທີ່ເຮັດໃຫ້ເກີດຕົ້ນໄຟ ຈະຕ້ອງໃຊ້ແທນຄືນໃຫ້ແກ່ຝ່າຍທີ່ຖືກເສັຍຫາຍນັ້ນ, ເວັ້ນເສຍແຕ່ໃນກໍລະນີທີ່ມີການຢັ້ງຢືນຢ່າງຈະແຈ້ງວ່າ ໄຟໄໝ້ນັ້ນໄດ້ເກີດຂຶ້ນດ້ວຍສາຍເຫດທຳມະຊາດທີ່ສຸດວິໄສ.

4. ທັງສອງຝ່າຍຕ້ອງວາງມາດຕະການ ເພື່ອປ້ອງກັນການລະບາດ ຂອງພະຍາດຕິດແປດທີ່ມາຈາກຄົນ, ຈາກສັດ ແລະ ມາຈາກສັດຕູພືດ ບໍ່ໃຫ້ແຜ່ລາມກາຍຊາຍແດນອອກໄປ. ແຕ່ລະຝ່າຍຕ້ອງແຈ້ງໃຫ້ກັນຊາບໂດຍດ່ວນ ປະກົດການຂອງພະຍາດຕິດແປດດັ່ງກ່າວເທົ່າທີ່ຝ່າຍຕົນໄດ້ພົບເຫັນ. ໃນກໍລະນີຈຳເປັນ, ທັງສອງຝ່າຍສາມາດເຮັດສັນຍາສະເພາະເພື່ອຮ່ວມກັນປ້ອງກັນການລະບາດຂອງພະຍາດຕິດແປດ ທີ່ມາຈາກຄົນ, ມາຈາກສັດ ແລະ ມາຈາກສັດຕູພືດ.

## <u>ພາກທີ IV</u>

### ວ່າດ້ວຍ ການໄປມາຫາສູ່ກັນ
### ແລະ ການປ້ອງກັນຄວາມສະຫງົບຕາມເຂດຊາຍແດນ

### <u>ມາດຕາ 13</u>

1. ເພື່ອສົ່ງເສີມການພົວພັນມິດຕະພາບ ແລະ ການຄ້າຂາຍທີ່ຖືກກົດໝາຍ ລະຫວ່າງພົນລະເມືອງຊາຍແດນຂອງສອງປະເທດ, ທັງສອງຝ່າຍອະນຸຍາດໃຫ້ພົນລະເມືອງຊາຍແດນຂອງສອງປະເທດຂ້າມໄປມາຫາສູ່ກັນ ເພື່ອຢ້ຽມຢາມພີ່ນ້ອງ, ປິ່ນປົວພະຍາດ, ແລກປ່ຽນຄ້າຂາຍ ແລະ ຮ່ວມງານບຸນປະເພນີຕ່າງໆຕາມເຂດຊາຍແດນ.

ຄຳວ່າພົນລະເມືອງຊາຍແດນໃນສັນຍາສະບັບນີ້ ແມ່ນໝາຍເຖິງພົນລະເມືອງລາວ ແລະ ພົນລະເມືອງຈີນ ຂອງບັນດາເມືອງທີ່ຕັ້ງຢູ່ຕິດກັບຊາຍແດນ ຂອງສອງປະເທດ.

2. ການຂ້າມຜ່ານຊາຍແດນຂອງພົນລະເມືອງຊາຍແດນ ແລະ ບຸກຄົນທີ່ດຳເນີນການຄ້າຊາຍແດນ ຂອງແຕ່ລະຝ່າຍຕ້ອງມີໜັງສືຜ່ານແດນ ຫລື ໃບຜ່ານແດນ ທີ່ອອກໃຫ້ໂດຍອົງການທີ່ໄດ້ຮັບສິດອຳນາດ ຂອງປະເທດຕົນ ແລະ ຈະຕ້ອງ ເຂົ້າ-ອອກ ຕາມດ່ານຊາຍແດນ ຫລື ຈຸດຜ່ານແດນຊົ່ວຄາວທີ່ສອງຝ່າຍໄດ້ກຳນົດໄວ້.

ໃບຜ່ານແດນຈະຕ້ອງບອກເຫດຜົນການໄປ, ກຳນົດເວລາ, ບ່ອນຈະໄປເຖິງ ແລະ ບ່ອນພັກເຊົາ. ໃບຜ່ານແດນໃຊ້ສະເພາະແຕ່ພົນລະເມືອງຊາຍແດນ ແລະ ບຸກຄົນທີ່ດຳເນີນການຄ້າຊາຍແດນ ຂອງສອງຝ່າຍ ແລະ ນຳໃຊ້ໃນເຂດຊາຍແດນທີ່ໄດ້ກຳນົດໄວ້ເທົ່ານັ້ນ.

ສຳລັບບຸກຄົນທີ່ອາຍຸບໍ່ເຖິງ 16 ປີ ອະນຸຍາດໃຫ້ຂ້າມຊາຍແດນໄດ້ ໃນຖານະເປັນຜູ້ຕິດຕາມຮ່ວມກັບຜູ້ມີໃບຜ່ານແດນ, ແຕ່ໃບຜ່ານແດນຕ້ອງແຈ້ງຈຳນວນ, ຊື່ ແລະ ນາມສະກຸນ ແລະ ອາຍຸຂອງຜູ້ຕິດຕາມ.

3. ກ່ຽວກັບໃບຜ່ານແດນ ຕ້ອງແມ່ນອົງການທີ່ໄດ້ຮັບການມອບໝາຍຂອງແຕ່ລະຝ່າຍ ຈັດທຳຂຶ້ນເປັນສອງພາສາຄື ພາສາລາວ ແລະ ພາສາຈີນ ແລະ ຕ້ອງແຈ້ງຮູບແບບຂອງໃບຜ່ານແດນນັ້ນໃຫ້ກັນຊາບກ່ອນຈະອອກນຳໃຊ້.

4. ພົນລະເມືອງຊາຍແດນ ເມື່ອເຄື່ອນໄຫວຢູ່ໃນດິນແດນຂອງອີກຝ່າຍໜຶ່ງ ຕ້ອງເຄົາລົບນັບຖືກົດໝາຍຂອງປະເທດນັ້ນ ແລະ ບັນດາຂໍ້ກຳນົດທີ່ສອງຝ່າຍໄດ້ຕົກລົງນຳກັນ. ທັງສອງຝ່າຍ ໃຫ້ການປົກປ້ອງສິດທິ ແລະ ຜົນປະໂຫຍດອັນຊອບທຳແກ່ພົນລະເມືອງຊາຍແດນຂອງກັນ ແລະ ກັນ.

## ມາດຕາ 14

1. ເພື່ອຄວາມສະດວກໃນການຄຸ້ມຄອງຄົນໄປ-ມາ ຜ່ານຊາຍແດນ ລະຫວ່າງ ສອງປະເທດ, ທັງສອງຝ່າຍຕົກລົງໄຂຈຸດເຂົ້າ-ອອກ ທາງບົກ (ດ່ານຊາຍແດນ) ດັ່ງລຸ່ມນີ້:

| ຊື່ດ່ານຝ່າຍລາວ | ຊື່ດ່ານຝ່າຍຈີນ |
|---|---|
| - ລານຕຸຍ | - ເມືອງຄັ່ງ |
| - ປາຄາ | - ມານຈອງ |
| - ບໍ່ເຕັນ | - ບໍ່ຫານ |
| - ປາງໄຮ | - ເມືອງມານ |

ທັງສອງຝ່າຍຕົກລົງເຫັນດີໃຫ້ບຸກຄົນປະເທດທີສາມ ຂ້າມຜ່ານຊາຍແດນລະຫວ່າງສອງປະເທດໄດ້ ໂດຍຜ່ານດ່ານ ຊາຍແດນບໍ່ເຕັນ-ບໍ່ຫານ.

2. ຍົກເວັ້ນບັນດາທາງໄກດ່ານຊາຍແດນທີ່ບົ່ງໄວ້ໃນວັກ 1 ຂອງມາດຕານີ້ ຖ້າຫາກເຫັນວ່າຈໍາເປັນ ອໍານາດການປົກຄອງຂັ້ນແຂວງເຂດຊາຍແດນຂອງສອງຝ່າຍ ຈະປຶກສາຫາລື ເພື່ອເປີດຈຸດຜ່ານແດນຊົ່ວຄາວ. ພາຍຫລັງທີ່ໄດ້ເປັນເອກະພາບກັນແລ້ວ ອໍານາດການປົກຄອງຂັ້ນແຂວງເຂດຊາຍແດນຂອງສອງຝ່າຍ ຈະຕ້ອງລາຍງານລັດຖະບານຂອງຕົນເພື່ອຂໍອະນຸມັດ ແລະ ປະຕິບັດ.

3. ໃນອານາຄົດ, ຖ້າທັງສອງຝ່າຍຕ້ອງການຈະຍົກລະດັບ ຈຸດຜ່ານແດນຊົ່ວຄາວຂຶ້ນເປັນດ່ານຊາຍແດນຕື່ມອີກ, ສາມາດຮັບຮອງເອົາດ້ວຍການແລກປ່ຽນສານ ໂດຍຜ່ານທາງການທູດ.

4. ການກວດກາການເຂົ້າ-ອອກ ຕາມດ່ານຊາຍແດນ ແມ່ນປະຕິບັດຕາມລະບຽບກໍານົດຂອງແຕ່ລະຝ່າຍ ຫລືອີງໃສ່ການຕົກລົງເຫັນດີຈາກທັງສອງຝ່າຍ. ການກວດກາການໄປມາຂ້າມຊາຍແດນຢູ່ຈຸດຜ່ານແດນຊົ່ວຄາວ ຕ້ອງປະຕິບັດຕາມວິທີການຄຸ້ມຄອງ ໃຫ້ຄືກັນກັບດ່ານຊາຍແດນທາງການ.

**<u>ມາດຕາ 15</u>**

1. ໃນເມື່ອມີຄົນຫລືສັດຂອງຝ່າຍໃດນຶ່ງໃນເຂດຊາຍແດນ ເກີດພະຍາດຕິດແປດ ອໍານາດການປົກຄອງທ້ອງຖິ່ນຂອງຝ່າຍນັ້ນ ຕ້ອງມີມາດຕະການປ້ອງກັນຢ່າງທັນການ, ພ້ອມກັນນັ້ນກໍຕ້ອງແຈ້ງຂ່າວໃຫ້ອີກຝ່າຍນຶ່ງຊາບເພື່ອຢຸດຕິການສັນຈອນໄປມາ ແລະ ການແລກປ່ຽນຊື້ຂາຍຜ່ານດ່ານຊາຍແດນເປັນການຊົ່ວຄາວ, ຖ້າຝ່າຍນຶ່ງ ໄດ້ຮຽກຮ້ອງຂໍຄວາມຊ່ວຍເຫລືອ, ຝ່າຍທີ່ຖືກຮ້ອງຂໍ ຈະຕ້ອງຊ່ວຍເຫລືອໂດຍທັນທີ ແລະ ສຸດຄວາມສາມາດຂອງຕົນ.

2. ອໍານາດການປົກຄອງທ້ອງຖິ່ນເຂດຊາຍແດນ ສາມາດຢຸດຕິການສັນຈອນ, ຊື້ຂາຍ ແລະ ຍົກຍ້າຍສັດຂ້າມຊາຍແດນເປັນການຊົ່ວຄາວ ໃນຂອບເຂດຊາຍແດນໃດນຶ່ງ ທີ່ເກີດໂລກລະບາດນັ້ນ ແລະ ລາຍງານຂຶ້ນຫາຂັ້ນເທິງຂອງຕົນໂດຍດ່ວນ. ສ່ວນການປິດ ແລະ ການເປີດປະຕູດ່ານຊາຍແດນເປັນການຊົ່ວຄາວ ແມ່ນອໍານາດການປົກຄອງທ້ອງຖິ່ນຂອງ

ແຕ່ລະຝ່າຍເປັນຜູ້ຕົກລົງ ແລະ ແຈ້ງການໃຫ້ອີກຝ່າຍນຶ່ງຊາບ ພ້ອມກັນນັ້ນຕ້ອງລາຍງານໃຫ້ຂັ້ນເທິງຂອງຕົນໂດຍດ່ວນ.

3. ໃນກໍລະນີມີຄົນເຈັບ ຫລືເກີດອຸປະຕິເຫດ ທີ່ຕ້ອງການປິ່ນປົວສຸກເສີນ, ພົນລະເມືອງຊາຍແດນຂອງຝ່າຍນຶ່ງ ສາມາດຕິດຕໍ່ພົວພັນໂດຍກົງ ກັບອົງການສາທາລະນະສຸກພື້ນຖານທີ່ຢູ່ໃກ້ຂອງອີກຝ່າຍນຶ່ງ ເພື່ອຂໍຄວາມຊ່ວຍເຫລືອປິ່ນປົວ, ພ້ອມກັນນັ້ນກໍ່ຕ້ອງແຈ້ງຂ່າວໃຫ້ອຳນາດການປົກຄອງຂອງຕົນຊາບ ເພື່ອພົວພັນປະກອບເອກະສານຢັ້ງຢືນທີ່ຈຳເປັນ.

4. ໃນກໍລະນີສັດລ້ຽງຂອງພົນລະເມືອງຊາຍແດນຂອງຝ່າຍນຶ່ງ ຂ້າມແດນໄປທຳລາຍຜົນລະປູກຂອງອີກຝ່າຍນຶ່ງ, ຜູ້ເປັນເຈົ້າຂອງສັດຕ້ອງໃຊ້ແທນຢ່າງເໝາະສົມ ຜ່ານການປຶກສາຫາລື ແລະ ຕົກລົງ ລະຫວ່າງ ສອງຝ່າຍ.

ໃນເມື່ອສັດລ້ຽງຂອງພົນລະເມືອງຊາຍແດນຂອງຝ່າຍນຶ່ງ ຂ້າມໄປອີກຝ່າຍນຶ່ງ, ຝ່າຍນັ້ນຕ້ອງຊ່ວຍຮັກສາເບິ່ງແຍງລ້ຽງດູ ແລະ ຕ້ອງແຈ້ງຂ່າວໃຫ້ຝ່າຍກ່ຽວຂ້ອງ ພ້ອມທັງຜູ້ເປັນເຈົ້າຂອງສັດ ເພື່ອມາຮັບເອົາຄືນ, ເຈົ້າຂອງສັດຕ້ອງຈ່າຍຄ່າແຮງງານ ແລະ ຄ່າເບິ່ງແຍງລ້ຽງດູສັດຕາມຄວາມເໝາະສົມ.

ໃນເວລາສັດຢູ່ໃນການຄຸ້ມຄອງຂອງຕົນ ຫ້າມບໍ່ໃຫ້ຜູ້ຮັກສາສັດໃຊ້ວຽກ ຫລືທຸບຕີທໍລະມານສັດນັ້ນໃຫ້ໄດ້ຮັບບາດເຈັບ ຫລືເຖິງແກ່ຄວາມຕາຍ, ຖ້າຫາກສັດເຈັບຫລືຕາຍຍ້ອນເຈດຕະນາທຳລາຍ ຜູ້ຮັກສາສັດຕ້ອງ ໃຊ້ແທນຢ່າງເໝາະສົມ.

ຖ້າພວກທີ່ກ່ຽວຂ້ອງບໍ່ສາມາດແກ້ໄຂດ້ວຍຕົນເອງໄດ້ ອຳນາດການປົກຄອງທ້ອງຖິ່ນຂອງສອງຝ່າຍ ຕ້ອງແກ້ໄຂຊ່ວຍເຂົາເຈົ້າ ບົນຈິດໃຈມິດຕະພາບຖານບ້ານໃກ້ເຮືອນ ຄຽງ ແລະ ເຂົ້າໃຈກັນ.

## ມາດຕາ 16

1. ໃນກໍລະນີທີ່ບຸກຄົນຂອງຝ່າຍໃດນຶ່ງ ຫາກຂ້າມແດນຢ່າງຜິດກົດໝາຍໄປຢູ່ອີກເບື້ອງນຶ່ງ, ພາຍຫລັງທີ່ໄດ້ສືບສວນ ແລະ ໃຊ້ມາດຕະການອັນຈຳເປັນຕາມລະບຽບກົດໝາຍແລ້ວ, ຕ້ອງແຈ້ງຂ່າວໃຫ້ອີກຝ່າຍນຶ່ງຊາບ. ເຈົ້າໜ້າທີ່ກ່ຽວຂ້ອງຂອງສອງຝ່າຍ ຈະປຶກສາ

ທາລືເພື່ອຮ່ວມມືກັນແກ້ໄຂບັນຫາການມອບ-ຮັບພວກດັ່ງກ່າວ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນຊາບ.

2. ການມອບ-ຮັບພວກຂ້າມຊາຍແດນທີ່ໄດ້ບົ່ງໄວ້ໃນຂໍ້ 1 ຂອງມາດຕານີ້ ສອງຝ່າຍຈະຕ້ອງໄດ້ລົງນາມບົດບັນທຶກຮ່ວມກັນ ແລະ ຕ້ອງດຳເນີນຢູ່ຕາມປະຕູດ່ານຊາຍແດນໃດນຶ່ງທີ່ຢູ່ໃກ້ຊຶ່ງທັງສອງຝ່າຍຈະຕົກລົງນຳກັນ.

3. ໃນເມື່ອຝ່າຍໃດນຶ່ງຫາກພົບເຫັນຊາກສົບຄົນຕາຍ ຢູ່ໃນເຂດຊາຍແດນ ແລະບໍ່ຮູ້ແຈ້ງວ່າຊາກສົບນັ້ນ ແມ່ນຄົນຂອງຝ່າຍໃດ, ຝ່າຍພົບເຫັນກ່ອນ ຕ້ອງແຈ້ງຂ່າວໃຫ້ອີກຝ່າຍ ນຶ່ງຊາບໂດຍດ່ວນ ເພື່ອພ້ອມກັນສັນລະສູດຊາກສົບນັ້ນ. ພາຍຫລັງ 48 ຊົ່ວໂມງຫລັງຈາກການແຈ້ງຂ່າວ ແລ້ວຖ້າຝ່າຍນັ້ນຫາກບໍ່ມາ, ຝ່າຍພົບເຫັນຕ້ອງມ້ຽນມັດຊາກສົບແລະ ເຮັດບົດບັນທຶກ ກ່ຽວກັບການມ້ຽນມັດຊາກສົບດັ່ງກ່າວນັ້ນ ເພື່ອສົ່ງໃຫ້ອີກຝ່າຍນຶ່ງໄວ້ເປັນຫລັກຖານ.

## <u>ມາດຕາ 17</u>

1.ທັງສອງຝ່າຍຈະຮ່ວມມືກັນ ໃນການປົກປັກຮັກສາຄວາມສະຫງົບສຸກ ຕາມເຂດຊາຍແດນລະຫວ່າງສອງປະເທດ.

ໃນເມື່ອຝ່າຍໃດນຶ່ງໄດ້ພົບເຫັນ ການເຄື່ອນໄຫວຂອງຄົນອີກຝ່າຍນຶ່ງ ທີ່ກະທຳຜິດກົດໝາຍຕາມເຂດຊາຍແດນ, ຝ່າຍທີ່ພົບເຫັນນັ້ນ ຕ້ອງແຈ້ງຂ່າວໃຫ້ອີກຝ່າຍນຶ່ງຊາບທັນທີ ແລະ ໃນເມື່ອຈຳເປັນຈະສົມທົບກັນເພື່ອຈັບຕົວກໍ່ໄດ້ ແລ້ວສົ່ງຄືນໃຫ້ກັນ.

2. ແຕ່ລະຝ່າຍຕ້ອງໃຊ້ມາດຕະການອັນເໝາະສົມ ຕາມກົດໝາຍຂອງຝ່າຍຕົນ ຕໍ່ຜູ້ທີ່ລະເມີດລະບຽບການຄຸ້ມຄອງຊາຍແດນ. ຖ້າແມ່ນພົນລະເມືອງຂອງຝ່າຍໃດ ຕ້ອງສົ່ງໃຫ້ຝ່າຍນັ້ນແກ້ໄຂ. ກ່ອນການນຳສົ່ງຕ້ອງແຈ້ງລາຍຊື່, ຮູບ, ທີ່ຢູ່ລະອຽດຂອງພວກກ່ຽວໃຫ້ອີກຝ່າຍນຶ່ງຊາບ, ພາຍຫລັງທີ່ຝ່າຍນັ້ນເຫັນດີແລ້ວ ຈຶ່ງກຳນົດເວລາສົ່ງ. ສ່ວນຫລັກຖານທີ່ກ່ຽວຂ້ອງ ແລະ ຂອງກາງທັງໝົດ ຖ້າເປັນຂອງຝ່າຍໃດຕ້ອງນຳສົ່ງໃຫ້ຝ່າຍນັ້ນ. ສຳລັບຄ່າໃຊ້ຈ່າຍໃນການຂົນສົ່ງ ແລະ ຄ່າປິ່ນປົວຮັກສາພະຍາບານ ໃຫ້ເຈົ້າໜ້າທີ່ກ່ຽວຂ້ອງຂອງສອງຝ່າຍ ຕົກລົງນຳກັນເປັນການລະອຽດຕ່າງຫາກ.

3. ຫ້າມບໍ່ໃຫ້ບຸກຄົນຂອງຝ່າຍໃດນຶ່ງ ຖືອາວຸດເຂົ້າໄປໃນດິນແດນຂອງອີກຝ່າຍນຶ່ງ ເວັ້ນເສຍແຕ່ຈະໄດ້ຮັບອະນຸຍາດ ເພື່ອປະຕິບັດໜ້າທີ່ການຮັກສາ ແລະ ປ້ອງກັນຄວາມສະຫງົບຮ່ວມກັນ.

**ມາດຕາ 18**

ບັນຫາການຄຸ້ມຄອງຄົນ ແລະ ຍານພາຫະນະຂົນສົ່ງຂອງທັງສອງຝ່າຍທີ່ ເຂົ້າ-ອອກ ຕາມຊາຍແດນ ເພື່ອດຳເນີນກິດຈະການ ການຂົນສົ່ງທາງບົກ ແລະ ທາງນ້ຳ ຫລືກິດຈະການ ການທ່ອງທ່ຽວນັ້ນ, ໃຫ້ພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍ ກຳນົດເປັນອັນລະອຽດ ແລະ ເຊັນກັນຕ່າງຫາກ.

**ມາດຕາ 19**

ຍານພາຫະນະຂົນສົ່ງສິນຄ້າບໍລິໂພກ ແລະ ອຸປະໂພກຂອງລາວ ທີ່ຈະລຳລຽງ ລະຫວ່າງ ດ່ານ ບໍ່ເຕັນ- ບໍ່ຫານຫາດ່ານ ປາຄາ- ມານຈອງ, ເມື່ອໄດ້ຮັບອະນຸຍາດ ຈາກຝ່າຍຈີນແລ້ວ ສາມາດຂ້າມຜ່ານດິນແດນຂອງຈີນ ຕາມເສັ້ນທາງທີ່ໄດ້ກຳນົດໄວ້ ແລະ ຈ່າຍຄ່າຜ່ານແດນ ແລະ ຄ່າຕ່າງໆຕາມທີ່ເຈົ້າໜ້າທີ່ທ້ອງຖິ່ນ ຂອງທັງສອງຝ່າຍກຳນົດນຳກັນ.

**ພາກທີ V**

**ວ່າດ້ວຍຕະຫລາດແລກປ່ຽນສິນຄ້າ ລະຫວ່າງ ພົນລະເມືອງຊາຍແດນ, ການຄ້າຊາຍແດນທີ່ມີມູນຄ່ານ້ອຍ ແລະ ການແລກປ່ຽນການຄ້າ ລະດັບທ້ອງຖິ່ນຢູ່ເຂດຊາຍແດນ.**

**ມາດຕາ 20**

1. ດ້ວຍຈຸດປະສົງເພື່ອສົ່ງເສີມການຂະຫຍາຍເສດຖະກິດຢູ່ເຂດຊາຍແດນຂອງສອງປະເທດ, ອຳນວຍຄວາມສະດວກໃນການແລກປ່ຽນ ອຸປະກອນການຜະລິດ ແລະ ສິນຄ້າທີ່ຈຳເປັນ ລະຫວ່າງພົນລະເມືອງຊາຍແດນຂອງສອງປະເທດ, ທັງສອງຝ່າຍເຫັນພ້ອມ

ນຳກັນ ໃຫ້ອົງການໆຄ້າຂັ້ນແຂວງ ຫລືຂັ້ນເມືອງຊາຍແດນຂອງສອງປະເທດ ດຳເນີນການແລກປ່ຽນການຄ້າທ້ອງຖິ່ນຕາມເຂດຊາຍແດນນຳກັນ.

2. ທັງສອງຝ່າຍເຫັນດີໃຫ້ໄຂຈຸດແລກປ່ຽນສິນຄ້າ (ຕະຫລາດຊາຍແດນ) ໃນສະຖານທີ່ ທີ່ເໝາະສົມ ຢູ່ເບື້ອງໃນຂອງປະຕູດ່ານຊາຍແດນທີ່ບົ່ງໄວ້ໃນມາດຕາ 14 ຂອງສັນຍາສະບັບນີ້. ຖ້າເຫັນມີຄວາມຈຳເປັນຈະເພີ່ມຕື່ມຫລືປ່ຽນແປງ ຈຸດແລກປ່ຽນສິນຄ້າ ແມ່ນອຳນາດການປົກຄອງ ທ້ອງຖິ່ນທັງສອງຝ່າຍ ຈະປຶກສາຫາລື ແລະ ຕົກລົງນຳກັນ.

## <u>ມາດຕາ 21</u>

1. ອີງຕາມຄວາມຕ້ອງການ ແລະ ຄວາມສາມາດ, ການແລກປ່ຽນການຄ້າຊາຍແດນລະດັບທ້ອງຖິ່ນ ລະຫວ່າງ ສອງປະເທດ ຈະດຳເນີນການຄ້າແບບນຳໃຊ້ເງິນ ຫລືແບບແລກປ່ຽນວັດຖຸພັນກໍ່ໄດ້. ອຳນາດການປົກຄອງຂັ້ນແຂວງເຂດຊາຍແດນ ຂອງສອງປະເທດ ຈະປຶກສາຫາລື ແລະ ຕົກລົງນຳກັນກ່ຽວກັບວິທີການລະອຽດ ໃນການແລກປ່ຽນການຄ້າທ້ອງຖິ່ນ ດັ່ງກ່າວ.

2. ໃນການດຳເນີນການຄ້າທ້ອງຖິ່ນ, ຕະຫລາດການຄ້າ ລະຫວ່າງພົນລະເມືອງຊາຍແດນ ແລະ ການຄ້າຊາຍແດນທີ່ມີມູນຄ່ານ້ອຍ ລະຫວ່າງ ສອງປະເທດນັ້ນ, ສາມາດນຳໃຊ້ເງິນທີ່ສອງຝ່າຍຮັບເອົາໄດ້.

## <u>ມາດຕາ 22</u>

1. ໃນການເຮັດການຄ້າທຸກຮູບແບບ ທີ່ໄດ້ກຳນົດໃນສັນຍາສະບັບນີ້, ສອງຝ່າຍຈະອີງໃສ່ກົດໝາຍ ແລະ ຂໍ້ກຳນົດຂອງປະເທດຕົນ ເພື່ອເກັບພາສີ, ຫລຸດຜ່ອນ ຫລື ຍົກເວັ້ນພາສີອາກອນສຳລັບສິນຄ້າ ແລະ ພາສີອື່ນໆ.

2. ໃນການເຮັດການຄ້າທຸກຮູບແບບ ທີ່ໄດ້ກຳນົດໃນສັນຍາສະບັບນີ້, ສອງຝ່າຍຕ້ອງເຄົາລົບລະບຽບການຄ້າ ຂາເຂົ້າ-ຂາອອກ ຂອງກັນ ແລະ ກັນ. ຫ້າມບໍ່ໃຫ້ນຳເອົາສິນຄ້າທີ່ຕ້ອງຫ້າມຜ່ານແດນ ແລະ ຫ້າມການຄ້າເຖື່ອນ.

3. ທັງສອງຝ່າຍຈະໄດ້ກຳນົດປະເພດ, ມູນຄ່າ, ຈຳນວນສິນຄ້າ ແລະ ເງິນທີ່ພົນລະເມືອງຊາຍແດນຂອງແຕ່ລະຝ່າຍ ຈະຖືຕິດຕົວຂ້າມຜ່ານຊາຍແດນໄປເພື່ອຊື້ຂາຍ, ແລກ

ປ່ຽນ, ເປັນຂອງຝາກຂອງຕ້ອນພີ່ນ້ອງເພື່ອນມິດ ໂດຍອີງຕາມລະບຽບພາສີ ຂອງແຕ່ລະຝ່າຍ.

4. ສິນຄ້າ ຂາເຂົ້າ_ຂາອອກ ສິນຄ້າແລກປ່ຽນ ແລະ ຍານພາຫະນະຂົນສົ່ງທຸກປະເພດຂອງສອງຝ່າຍ ຕ້ອງມີໜັງສືອະນຸຍາດ ທີ່ອອກໃຫ້ໂດຍອົງການທີ່ມີສິດອຳນາດຂອງແຕ່ລະຝ່າຍ ແລະ ຕ້ອງປະຕິບັດໃຫ້ຖືກຕາມຂໍ້ກຳນົດກ່ຽວກັບລະບຽບພາສີ, ອະນາໄມສາກົນ ແລະ ກົດໝາຍທີ່ກ່ຽວຂ້ອງ ຂອງແຕ່ລະຝ່າຍ.

5. ຄົນ, ເຄື່ອງຂອງ, ສິນຄ້າ ແລະ ຍານພາຫະນະຂົນສົ່ງ ສາມາດຂ້າມຊາຍແດນໄປມາໄດ້ ໃນເມື່ອມີໜັງສືຄົບຖ້ວນ ຖືກຕ້ອງຕາມລະບຽບ, ຕາມທີ່ໄດ້ກ່າວໄວ້ໃນຂໍ້ 4 ຂອງມາດຕານີ້ ແລະ ຕ້ອງຜ່ານໃຫ້ຖືກຕາມປະຕູດ່ານ ທີ່ສອງຝ່າຍໄດ້ກຳນົດໄວ້.

6. ກ່ຽວກັບການຍົກເວັ້ນການກວດກາໃນກໍລະນີພິເສດ, ທັງສອງຝ່າຍຈະປຶກສາຫາລືກັນເປັນແຕ່ລະເທື່ອໄປ.

## <u>ມາດຕາ 23</u>

ເພື່ອອຳນວຍຄວາມສະດວກ ໃຫ້ແກ່ພົນລະເມືອງຊາຍແດນຂອງສອງຝ່າຍ ໃນການແລກປ່ຽນຊື້ຂາຍຕາມຈຸດແລກປ່ຽນ (ຕະຫລາດຊາຍແດນ) ຖ້າມີເງື່ອນໄຂ ທັງສອງຝ່າຍຈະຈັດຕັ້ງໜ່ວຍແລກປ່ຽນເງິນຢູ່ດ່ານຊາຍແດນ ຫລືຢູ່ຈຸດຕະຫລາດຊາຍແດນ ຂອງແຕ່ລະຝ່າຍ. ສຳລັບອັດຕາແລກປ່ຽນເງິນນັ້ນ ພາກສ່ວນກ່ຽວຂ້ອງຈະປຶກສາຫາລື ແລະ ຕົກລົງກັນ.

## <u>ມາດຕາ 24</u>

ການບໍ່ລົງລອຍກັນ ທີ່ອາດຈະເກີດຂຶ້ນໃນການດຳເນີນການຄ້າທຸກຮູບແບບ ທີ່ໄດ້ກຳນົດໄວ້ໃນສັນຍາສະບັບນີ້ ໃຫ້ຄູ່ກໍລະນີແກ້ໄຂນຳກັນ ໂດຍຜ່ານການປຶກສາຫາລືແບບມິດຕະພາບ.

ຖ້າວ່າຄູ່ກໍລະນີບໍ່ສາມາດແກ້ໄຂນຳກັນໄດ້, ໃຫ້ອຳນາດການປົກຄອງຂັ້ນເມືອງ ຫລືຂັ້ນແຂວງ ຢູ່ເຂດຊາຍແດນຂອງສອງຝ່າຍ ປຶກສາຫາລືກັນເພື່ອແກ້ໄຂ .

## ພາກທີ VI
ວ່າດ້ວຍລະບຽບຕິດຕໍ່ພົວພັນຕາມເຂດຊາຍແດນ

### ມາດຕາ 25

ເພື່ອເພີ່ມທະວີການຄຸ້ມຄອງເຂດຊາຍແດນ ລະຫວ່າງ ສອງປະເທດ, ອຳນາດການປົກຄອງທ້ອງຖິ່ນ ຕາມເຂດຊາຍແດນຂອງສອງຝ່າຍ ຕົກລົງສ້າງລະບຽບການຕິດຕໍ່ພົວພັນຕາມຂັ້ນທີ່ເທົ່າທຽມກັນ.

1. ເຈົ້າໜ້າທີ່ທ້ອງຖິ່ນຂອງສອງຝ່າຍ ດຳເນີນການຕິດຕໍ່ພົວພັນ ໃນຂັ້ນທີ່ເທົ່າທຽມກັນຄືດັ່ງລຸ່ມນີ້:

ແຂວງຜົ້ງສາລີ, ອຸດົມໄຊ ແລະ ຫລວງນ້ຳທາ (ຝ່າຍລາວ)_ແຂວງຢູນານ (ຝ່າຍຈີນ).

ເມືອງ ຍອດອູ (ຝ່າຍລາວ)_ເມືອງ ຈຽງເຊີງ (ຝ່າຍຈີນ).

ເມືອງຍອດອູ, ບຸນເໜືອ, ນາໝໍ້, ນ້ຳທາ ແລະ ເມືອງສິງ (ຝ່າຍລາວ)_ເມືອງ ຫລ້າ (ຝ່າຍຈີນ).

2. ເຈົ້າໜ້າທີ່ທ້ອງຖິ່ນຂອງສອງຝ່າຍ ຈະຮັບຜິດຊອບແກ້ໄຂ ແລະ ປະຕິບັດບັນດາວຽກງານສຳຄັນທີ່ກ່ຽວຂ້ອງກັບສັນຍາສະບັບນີ້ ດັ່ງລຸ່ມນີ້:

ກ. ບັນດາວຽກງານທີ່ໄດ້ຮັບການມອບໝາຍ ຈາກລັດຖະບານ.

ຂ. ດຳເນີນການຄຸ້ມຄອງ, ກວດກາ ແລະ ປົກປັກຮັກສາເສັ້ນຊາຍແດນ ແລະ ຫລັກໝາຍຊາຍແດນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ.

ຄ. ບັນຫາການໄປມາຫາສູ່ກັນຕາມເຂດຊາຍແດນ (ລວມທັງການຜະລິດ ແລະ ການເຄື່ອນໄຫວດ້ານການຄ້າ, ຮ່ວມງານບຸນປະເພນີຕ່າງໆ ແລະ ການຄຸ້ມຄອງການໄປມາປະຈຳວັນ ແລະ ອື່ນໆ) ຂອງພົນລະເມືອງຊາຍແດນຂອງສອງຝ່າຍ.

ງ. ບັນຫາການປ້ອງກັນຄວາມສະຫງົບຕາມເຂດຊາຍແດນ (ລວມທັງການສົມທົບ ແລະ ການຮ່ວມມືກັນໃນການຄຸ້ມຄອງ ເພື່ອປ້ອງກັນຄວາມສະຫງົບ, ການປາບປາມການຄ້າຂອງເຖື່ອນ ແລະ ການຄ້າຢາເສບຕິດ, ແກ້ໄຂບັນຫາຜູ້ລະເມີດຂໍ້ກຳນົດຕ່າງໆ ທີ່ກ່າວໄວ້ໃນສັນຍາສະບັບນີ້ ແລະ ອື່ນໆ).

ຈ. ບັນຫາອື່ນໆທີ່ຈຳເປັນ ຕ້ອງຜ່ານການແກ້ໄຂຮ່ວມກັນ ຂອງເຈົ້າໜ້າທີ່ທ້ອງຖິ່ນຂອງສອງຝ່າຍ.

3. ການຕິດຕໍ່ພົວພັນ ລະຫວ່າງເຈົ້າໜ້າທີ່ທ້ອງຖິ່ນ ຂອງສອງຝ່າຍ ແມ່ນດຳເນີນດ້ວຍຮູບການພົບປະຫາລືກັນ. ເນື້ອໃນ, ເວລາ ແລະ ສະຖານທີ່ຂອງການພົບປະຫາລືກັນນັ້ນ, ສອງຝ່າຍ ຕ້ອງຕິດຕໍ່ກັນໂດຍຜ່ານດ່ານປ້ອງກັນຊາຍແດນ ເພື່ອກຳນົດນຳກັນໃຫ້ແຈ່ມແຈ້ງໄວ້ລ່ວງໜ້າ.

4. ການພົບປະຫາລືແຕ່ລະຄັ້ງ ຕ່າງຝ່າຍຕ່າງບັນທຶກ. ບັນຫາສຳຄັນທີ່ໄດ້ຕົກລົງເຫັນດີນຳກັນ ຈະຕ້ອງໄດ້ເຮັດບົດບັນທຶກເປັນສອງສະບັບຕົ້ນ ຄືພາສາລາວ ແລະ ພາສາຈີນ ໂດຍການລົງນາມຮ່ວມກັນ ຂອງຜູ້ຕາງໜ້າຂອງສອງຝ່າຍ ແລ້ວລາຍງານໃຫ້ຂັ້ນເທິງຂອງຕົນຊາບ.

## <u>ມາດຕາ 26</u>

ເພື່ອແກ້ໄຂວຽກງານປະຈຳວັນ ຕາມຊາຍແດນໃຫ້ທັນການ, ທັງສອງຝ່າຍຈະກຳນົດລະບຽບການພົບປະຫາລືກັນ ລະຫວ່າງຜູ້ຕາງໜ້າ, ຮອງຜູ້ຕາງໜ້າ ແລະ ເຈົ້າໜ້າທີ່ຕິດຕໍ່ພົວພັນ ຂອງອົງການປ້ອງກັນຊາຍແດນຂອງສອງຝ່າຍ. ຜູ້ຕາງໜ້າ ແລະ ຮອງຜູ້ຕາງໜ້າຂອງອົງການປ້ອງກັນຊາຍແດນຂອງສອງຝ່າຍ ແມ່ນອົງການຮັບຜິດຊອບທີ່ກ່ຽວຂ້ອງຂອງລັດຖະບານແຕ່ລະຝ່າຍ ເປັນຜູ້ແຕ່ງຕັ້ງ ແລະ ດຳເນີນວຽກງານ ດ້ວຍວິທີການພົບປະຫາລືກັນ. ເຈົ້າໜ້າທີ່ຕິດຕໍ່ພົວພັນ ແມ່ນຜູ້ຕາງໜ້າຂອງອົງການປ້ອງກັນຊາຍແດນ ເປັນຜູ້ແຕ່ງຕັ້ງ ແລະ ດຳເນີນວຽກງານດ້ວຍວິທີການພົບປະຕິດຕໍ່ກັນ.

## <u>ມາດຕາ 27</u>

ບັນດາອົງການວິຊາການທີ່ກ່ຽວຂ້ອງເຊັ່ນ (ອົງການພາສີ, ກວດກາການຄ້າ, ປ້ອງກັນພະຍາດ, ກວດກາສັດ ແລະ ພືດ, ກວດກາຊາຍແດນ ແລະ ອື່ນໆ) ແລະ ບັນດາອົງການໆຄ້າຂອງສອງຝ່າຍ ທີ່ຕັ້ງຢູ່ບັນດາເມືອງຕາມເຂດຊາຍແດນ ສາມາດດຳເນີນການຕິດຕໍ່ພົວພັນທາງດ້ານວິຊາສະເພາະ ແລະ ພົບປະຫາລືກັນ ເປັນປະຈຳໄດ້.

## ມາດຕາ 28

ຖ້າມີຄວາມຈຳເປັນ, ໃນການພົບປະຫາລື ລະຫວ່າງອຳນາດການປົກຄອງທ້ອງຖິ່ນ ແລະ ລະຫວ່າງຜູ້ຕາງໜ້າອົງການປ້ອງກັນຊາຍແດນນັ້ນ ຈະເອົາຜູ້ຕາງໜ້າ ຫລືຊ່ຽວຊານຂອງ ອົງການອື່ນໆທີ່ກ່ຽວຂ້ອງເຂົ້າຮ່ວມນຳກໍໄດ້, ແຕ່ຕ້ອງແຈ້ງໃຫ້ອີກຝ່າຍນຶ່ງຊາບລ່ວງໜ້າກ່ອນ. ການພົບປະຈະເປີດຂຶ້ນໄດ້ ໃນເມື່ອສອງຝ່າຍເຫັນມີຄວາມຈຳເປັນ ຫລືມີການສະເໜີຂອງຝ່າຍໃດນຶ່ງ. ການພົບປະຈະຜັດປ່ຽນກັນຈັດຂຶ້ນ ໃນດິນແດນຂອງແຕ່ລະຝ່າຍ ແລະ ຖ້າຈັດຢູ່ຝ່າຍໃດແມ່ນຝ່າຍນັ້ນເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ຕະຫລອດໄລຍະການພົບປະນັ້ນ.

## ພາກທີ VII

### ວ່າດ້ວຍບົດບັນຍັດສຸດທ້າຍ

## ມາດຕາ 29

ໃນເມື່ອມີຄວາມເຫັນແຕກຕ່າງກັນ ແລະ ບໍ່ສາມາດຕົກລົງກັນໄດ້ໃນຂັ້ນອຳນາດການປົກຄອງທ້ອງຖິ່ນ ແລະ ອົງການທີ່ກ່ຽວຂ້ອງໃນການປະຕິບັດສັນຍາສະບັບນີ້, ທັງສອງຝ່າຍຈະຕ້ອງລາຍງານໄປຍັງ ລັດຖະບານ ຂອງໃຜລາວໂດຍທັນທີ ພ້ອມທັງຕ້ອງແກ້ໄຂບັນຫາໂດຍສັນຕິວິທີ. ກ່ອນຂໍ້ຂັດແຍ່ງຈະໄດ້ ຮັບການແກ້ໄຂ, ທັງສອງຝ່າຍ ຈະຕ້ອງຮັກສາການຕິດຕໍ່ພົວພັນນຳກັນ ຢ່າງເປັນປົກກະຕິ ແລະ ບໍ່ເຮັດໃຫ້ສະພາບການເກີດສັບສົນຂຶ້ນຕື່ມ.

## ມາດຕາ 30

ສັນຍາສະບັບນີ້ຕ້ອງໄດ້ຮັບການໃຫ້ສັດຕະຍາບັນ, ສານສັດຕະຍາບັນຈະໄດ້ທຳ ການແລກປ່ຽນກັນ ທີ່ນະຄອນຫລວງ ວຽງຈັນ.

ສັນຍາສະບັບນີ້ ມີຜົນສັກສິດນັບແຕ່ມື້ແລກປ່ຽນສານສັດຕະຍາບັນເປັນຕົ້ນໄປ ແລະມີຜົນບັງຄັບໃຊ້ກຳນົດ 10 ປີ. ຖ້າຫາກວ່າຝ່າຍໃດຝ່າຍນຶ່ງ ບໍ່ແຈ້ງຈຸດປະສົງຂອງຕົນທີ່ຢາກຍົກເລີກສັນຍາ ເປັນລາຍລັກອັກສອນໃຫ້ອີກຝ່າຍນຶ່ງຊາບກ່ອນລ່ວງໜ້າ 6 ເດືອນ ກ່ອນ

ສັນຍາຈະໝົດອາຍຸ, ໃຫ້ຖືວ່າສັນຍາສະບັບນີ້ ຈະມີຄຸນຄ່າໄປໃນຕົວ ຕໍ່ໄປອີກ 10 ປີ ແລະ ຈະມີຄຸນຄ່າຕໍ່ໆໄປອີກ ຕາມວິທີດັ່ງກ່າວນີ້.

ສັນຍາສະບັບນີ້ ຈະຖືກດັດແປງ ຫລືເພີ່ມເຕີມໄດ້ຕາມຄວາມເຫັນຊອບຂອງທັງສອງຝ່າຍ ແລະ ຝ່າຍທີ່ນຳສະເໜີດັດແປງ ຫລື ເພີ້ມຕື່ມ ຕ້ອງແຈ້ງຄວາມປະສົງດັ່ງກ່າວໃຫ້ອີກຝ່າຍນຶ່ງຊາບລ່ວງໜ້າ 90 ວັນ.

## <u>ມາດຕາ 31</u>

ພາຍຫລັງທີ່ສັນຍາສະບັບນີ້ ມີຜົນບັງຄັບໃຊ້ແລ້ວ, ສັນຍາຊົ່ວຄາວວ່າດ້ວຍການແກ້ໄຂກິດຈະການຊາຍແດນ ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ປະຊາຊົນຈີນ ສະບັບລົງວັນທີ 8 ເດືອນ 10 ປີ 1989 ແລະ ຂໍ້ກຳນົດໃນສັນຍາອື່ນໆ ລະຫວ່າງ ສອງປະເທດ ທີ່ຂັດກັບສັນຍາສະບັບນີ້ ລ້ວນແລ້ວແຕ່ຈະໝົດຄຸນຄ່າໄປໃນຕົວ.

ສັນຍາສະບັບນີ້ ລົງນາມໃນວັນທີ 03 ເດືອນ 12 ປີ 1993 ທີ່ນະຄອນຫລວງປັກກິ່ງ, ເປັນສອງສະບັບຕົ້ນ ຄື ພາສາລາວ ແລະ ພາສາຈີນ. ທັງສອງ ພາສາ ມີຄຸນຄ່າເທົ່າທຽມກັນ.

ຜູ້ຕາງໜ້າທີ່ມີອຳນາດເຕັມ
ຂອງລັດຖະບານ ສາທາລະນະລັດ
ປະຊາທິປະໄຕ ປະຊາຊົນລາວ



ຜູ້ຕາງໜ້າທີ່ມີອຳນາດເຕັມ
ຂອງລັດຖະບານ ສາທາລະນະລັດ
ປະຊາຊົນຈີນ

李 鹏